ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 061 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 16/01/2012

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍ
### ວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.

~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດ ໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 27/ສພຊ, ລົງວັນທີ 21 ທັນວາ 2011 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 27/ຄປຈ, ລົງວັນທີ 03 ມັງກອນ 2012.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*ມາດຕາ 1* : ປະກາດໃຊ້ກົດໝາຍ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 27 /ສພຊ

# ມະຕິຕົກລົງ

## ຂອງ

## ສະພາແຫ່ງຊາດ ແຫ່ງ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງ ໃນວາລະກອງປະຊຸມຕອນບ່າຍຂອງວັນທີ 21 ທັນວາ 2011

## ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u>. ຮັບຮອງເອົາ ກົດໝາຍວ່າດ້ວຍ ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງ ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫຼາຍ

<u>ມາດຕາ 2</u>. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 21 ທັນວາ 2011

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------------------

ສະພາແຫ່ງຊາດ

ເລກທີ 11 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 21 ທັນວາ 2011

# ກົດໝາຍ

# ວ່າດ້ວຍການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ, ການຈັດຕັ້ງ ແລະ ການເຄື່ອນໄຫວ ກ່ຽວກັບວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການພັດທະນາ ແລະ ສ້າງຄວາມສາມາດໃນການແຂ່ງຂັນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອຊຸກຍູ້ການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ, ແນໃສ່ສ້າງວຽກເຮັດງານທຳ, ສ້າງລາຍຮັບ ແລະ ຍົກສູງລະດັບຊີວິດການເປັນຢູ່ຂອງປະຊາຊົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີການຂະຫຍາຍຕົວຢ່າງໝັ້ນຄົງ.

**ມາດຕາ 2. ວິສາຫະກິດຂະໜາດນ້ອຍ ແລະ ກາງ**

ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນ ຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນ ແລະ ເຄື່ອນໄຫວຢ່າງຖືກຕ້ອງ ຕາມກົດໝາຍຂອງ ສປປ ລາວ. ຂະໜາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ກຳນົດຕາມແຕ່ລະຂະແໜງວິສາຫະກິດ ໂດຍຖືເອົາຈຳນວນແຮງງານສະເລ່ຍໃນປີ, ມູນຄ່າຊັບສິນທັງໝົດ ແລະ ລວມຍອດລາຍຮັບທຸລະກິດປະຈຳປີ ເປັນພື້ນຖານບ່ອນອີງ.

ເງື່ອນໄຂການຈັດແບ່ງຂະໜາດຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນ ລັດຖະບານເປັນຜູ້ກຳນົດໃນແຕ່ລະໄລຍະ.

**ມາດຕາ 3. ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ**

ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນ ການວາງນະໂຍບາຍ ແລະ ການກຳນົດມາດຕະການ ເພື່ອສ້າງສະພາບແວດລ້ອມ ແລະ ເງື່ອນໄຂດ້ານຕ່າງໆ ທີ່ອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບກິດຈະການ ໃນການສ້າງຕັ້ງ, ດຳເນີນ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ.

**ມາດຕາ 4. ການອະທິບາຍຄຳສັບ**

**ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:**

1. **ວນກ ໝາຍເຖິງ** ວິສາຫະກິດຂະໜາດນ້ອຍ ແລະ ກາງ;
2. **ຜູ້ປະກອບກິດຈະການ ໝາຍເຖິງ** ເຈົ້າຂອງ ຫຼື ຜູ້ບໍລິຫານວິສາຫະກິດທີ່ເຮັດທຸລະກິດໃດໜຶ່ງເພື່ອສ້າງລາຍໄດ້ທີ່ເກີດຈາກຫົວຄິດປະດິດສ້າງ, ພູມປັນຍາ ແລະ ມີຄວາມຮັບຜິດຊອບຕໍ່ຄວາມສ່ຽງ ທັງກຳໄລ-ຂາດທຶນ ດ້ວຍຕົນເອງ;
3. **ສູນກໍ່ສ້າງຜູ້ປະກອບກິດຈະການ ໝາຍເຖິງ** ສະຖານທີ່ຮັບເອົາຜູ້ທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດໃໝ່ເຂົ້າຝຶກອົບຮົມ, ເຮັດຈຳລອງ ກ່ຽວກັບການຜະລິດທຸລະກິດ ໂດຍມີລະບົບບໍລິຫານຈັດການ ແລະ ໃຫ້ຄຳປຶກສາ;
4. **ທຸລະກິດຕົວແທນ ໝາຍເຖິງ** ທຸລະກິດທີ່ໄດ້ຮັບການອະນຸຍາດໃຫ້ເປັນຕົວແທນໃນການຜະລິດ, ການຈຳໜ່າຍສິນຄ້າ ແລະ ການບໍລິການ ພາຍໃຕ້ຊື່ຂອງທຸລະກິດຕົ້ນແບບທີ່ເປັນເຈົ້າຂອງຍີ່ຫໍ້ການຄ້າໃດໜຶ່ງ;
5. **ຕ່ອງໂສ້ມູນຄ່າເພີ່ມ ໝາຍເຖິງ** ບັນດາຂອດການເຄື່ອນໄຫວທຸລະກິດທີ່ພົວພັນກັນ ຊຶ່ງເລີ່ມຈາກຂອດວັດຖຸດິບ ເພື່ອສະໜອງໃຫ້ແກ່ການຜະລິດ, ການແປຮູບ, ການຄ້າ, ການຕະຫຼາດ ຈົນເຖິງການຊົມໃຊ້ ສຳລັບສິນຄ້າໃດໜຶ່ງ;
6. **ຜະລິດຕະພາບ ໝາຍເຖິງ** ປະສິດທິພາບ ແລະ ປະສິດທິຜົນຂອງການເຄື່ອນໄຫວວຽກງານ, ການຜະລິດທຸລະກິດ ໂດຍເປັນການປຽບທຽບລະຫວ່າງຜົນໄດ້ຮັບ ແລະ ປັດໃຈ ນຳເຂົ້າ ເຊັ່ນ ແຮງງານ, ທຶນ, ວັດຖຸດິບ, ເວລາ;
7. **ອົງການຜະລິດຕະພາບແຫ່ງອາຊີ ໝາຍເຖິງ** ອົງການຈັດຕັ້ງລະຫວ່າງລັດຖະບານຂອງບັນດາປະເທດ ຫຼື ເຂດເສດຖະກິດໃນພາກພື້ນອາຊີ-ປາຊີຟິກ ທີ່ເປັນພາຄີ ຊຶ່ງມີພາລະບົດບາດໃນການສົ່ງເສີມການເພີ່ມຜະລິດຕະພາບ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງບັນດາປະເທດສະມາຊິກ;
8. **ອົງການຜະລິດຕະພາບແຫ່ງຊາດລາວ ໝາຍເຖິງ** ອົງການທີ່ໄດ້ຮັບການແຕ່ງຕັ້ງຈາກລັດຖະບານ ເພື່ອເຄື່ອນໄຫວວຽກງານຮ່ວມກັບອົງການຜະລິດຕະພາບແຫ່ງອາຊີ.

**ມາດຕາ 5. ນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ**

ລັດ ຊຸກຍູ້ ແລະ ສົ່ງເສີມການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ແນໃສ່ສ້າງຄວາມສາມາດໃນການແຂ່ງຂັນ ດ້ານການຜະລິດ, ການຄ້າ ແລະ ການບໍລິການ ດ້ວຍການສະໜັບສະໜູນທາງດ້ານທຶນຮອນ, ວິຊາການ, ເຕັກໂນໂລຊີ, ການຕະຫຼາດ, ການຄົ້ນຄວ້າ ທາງດ້ານວິທະຍາສາດ ແລະອື່ນໆ.

**ມາດຕາ 6. ຫຼັກການກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ**

**ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຕ້ອງປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:**

1. ສອດຄ່ອງກັບນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງປະເທດ, ເຂດແຄວ້ນ, ຂະແໜງການ ແລະ ສອດຄ່ອງກັບເງື່ອນໄຂຂອງຂະແໜງ ວນກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້;
2. ຮັບປະກັນໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຮັບການສ້າງຕັ້ງ, ດຳເນີນ ແລະ ພັດທະນາ ດ້ວຍຄວາມສະດວກ, ວ່ອງໄວ, ໂປ່ງໃສ ແລະ ຍຸຕິທຳ;
3. ຮັບປະກັນການສ້າງວຽກເຮັດງານທຳ ແລະ ຍົກສູງຄຸນນະພາບຊີວິດຂອງປະຊາຊົນ;
4. ຮັບຮູ້, ຮັບປະກັນການປົກປ້ອງກຳມະສິດ ແລະ ສິດຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ;
5. ປົກປັກຮັກສາ ແລະ ຟື້ນຟູ ຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ ແລະ ຮັບປະກັນຄວາມປອດໄພຂອງສັງຄົມ.

**ມາດຕາ 7. ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບທຸກຂະແໜງວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ສ້າງຕັ້ງຂຶ້ນ ແລະ ດຳເນີນກິດຈະການ ຢ່າງຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ.

**ມາດຕາ 8. ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນຕົ້ນ ວຽກງານຜະລິດຕະພາບ ດ້ວຍການແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານ, ການຍົກລະດັບຄວາມຮູ້ ແລະ ຄວາມສາມາດຂອງບຸກຄະລາກອນ, ການຖ່າຍທອດເຕັກໂນໂລຊີ, ການຍາດແຍ່ງການຊ່ວຍເຫຼືອ ແລະ ອື່ນໆ ບົນພື້ນຖານຄວາມເປັນເອກະລາດ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະ ປະຕິບັດຢ່າງສອດຄ່ອງກັບສັນຍາ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ບັນດາຂະແໜງວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 9. ບັນດາຂະແໜງວິສາຫະກິດຂະໜາດນ້ອຍ ແລະ ກາງ**

ວິສາຫະກິດຂະໜາດນ້ອຍ ແລະ ກາງ ແບ່ງອອກເປັນ ສາມ ຂະແໜງ ດັ່ງນີ້:

1. ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການຜະລິດສິນຄ້າ;
2. ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການຄ້າ;
3. ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການບໍລິການ.

**ມາດຕາ 10. ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການຜະລິດສິນຄ້າ**

ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການຜະລິດສິນຄ້າ ແມ່ນ ຂະແໜງວິສາຫະກິດ ທີ່ເຄື່ອນໄຫວທຸລະກິດໃນຂົງເຂດອຸດສາຫະກຳປຸງແຕ່ງ, ຫັດຖະກຳ ແລະ ການຜະລິດກະສິກຳ ເພື່ອເປັນສິນຄ້າ.

**ມາດຕາ 11. ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການຄ້າ**

ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການຄ້າ ແມ່ນ ຂະແໜງວິສາຫະກິດ ທີ່ເຄື່ອນໄຫວທຸລະກິດໃນຂົງເຂດການຄ້າ ຂາຍຍົກ ແລະ ຂາຍຍ່ອຍ.

**ມາດຕາ 12. ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການບໍລິການ**

ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ດຳເນີນການບໍລິການ ແມ່ນ ຂະແໜງວິສາຫະກິດທີ່ເຄື່ອນໄຫວທຸລະກິດໃນຂົງເຂດການບໍລິການ ດ້ານການທ່ອງທ່ຽວ, ຄົມມະນາຄົມ-ຂົນສົ່ງ, ທະນາຄານ-ການເງິນ, ການສຶກສາ, ສາທາລະນະສຸກ ແລະ ການບໍລິການອື່ນ ທີ່ບໍ່ຂັດກັບກົດໝາຍ.

## ພາກທີ III
## ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 13. ກິດຈະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ**

ການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ປະກອບດ້ວຍກິດຈະການຕົ້ນຕໍ ດັ່ງນີ້:

1. ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ;
2. ການເຂົ້າເຖິງແຫຼ່ງທຶນ;
3. ນະໂຍບາຍດ້ານພາສີ ແລະ ອາກອນ;

4. ການສ້າງ ແລະ ພັດທະນາຜູ້ປະກອບກິດຈະການ;
5. ການບໍລິການໃຫ້ຄໍາປຶກສາ ພັດທະນາທຸລະກິດ;
6. ການຮ່ວມມືທຸລະກິດ ລະຫວ່າງ ວິສາຫະກິດຂະໜາດນ້ອຍ ແລະ ກາງ ກັບວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດ;
7. ການເພີ່ມຜະລິດຕະພາບ;
8. ການເຂົ້າເຖິງ ແລະ ການຂະຫຍາຍ ຕະຫຼາດ;
9. ການຮ່ວມກຸ່ມທຸລະກິດ;
10. ສະຖານທີ່ປະກອບກິດຈະການ;
11. ການສົ່ງເສີມການນໍາໃຊ້ເຕັກໂນໂລຊີທີ່ກ້າວໜ້າ;
12. ການນໍາໃຊ້ ແລະ ການປົກປ້ອງຊັບສິນທາງປັນຍາ;
13. ການສະໜອງແລະ ການເຂົ້າເຖິງ ຂໍ້ມູນຂ່າວສານ.

**ມາດຕາ 14. ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍ**

ລັດ ເອົາໃຈໃສ່ຕໍ່ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການສ້າງຕັ້ງ ແລະ ດໍາເນີນທຸລະກິດ ຂອງ ວນກ ໂດຍເນັ້ນໃສ່ການສ້າງ ແລະ ປັບປຸງລະບຽບກົດໝາຍໃຫ້ມີຄວາມຈະແຈ້ງ ແລະ ຮັດກຸມ, ກໍານົດວິທີການແກ້ໄຂບັນຫາທີ່ເປັນການກີດໜ່ວງ ພ້ອມກັນນັ້ນ ກໍຕ້ອງເພີ່ມທະວີການບໍລິຫານ ແລະ ການບໍລິການຂອງລັດໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ໂປ່ງໃສ.

**ມາດຕາ 15. ການເຂົ້າເຖິງແຫລ່ງທຶນ**

ລັດ ອໍານວຍຄວາມສະດວກໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດເຂົ້າເຖິງແຫຼ່ງທຶນດ້ວຍການສ້າງລະບຽບການ, ມາດຕະການດ້ານການເງິນ ແລະ ນະໂຍບາຍສິນເຊື່ອ.

ລັດ ມີນະໂຍບາຍສະໜອງທຶນໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ເພື່ອເປັນສິນເຊື່ອໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນອັດຕາດອກເບ້ຍ ແລະ ກໍານົດເວລາທີ່ເໝາະສົມ ຫຼື ອະນຸຍາດໃຫ້ສ້າງຕັ້ງທະນາຄານວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນການສະເພາະ.

ທະນາຄານແຫ່ງ ສປປ ລາວ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ສ້າງກົນໄກ, ປັບປຸງໂຄງສ້າງດ້ານສິນເຊື່ອ ແລະ ອອກຜະລິດຕະພັນດ້ານການເງິນຫຼາຍປະເພດ ໃນການສະໜອງສິນເຊື່ອ, ການຄໍ້າປະກັນສິນເຊື່ອ, ການເຊົ່າສິນເຊື່ອ, ການຮ່ວມລົງທຶນ ແລະ ອື່ນໆ ເພື່ອຮັບປະກັນໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດເຂົ້າເຖິງແຫຼ່ງທຶນໄດ້ຢ່າງງ່າຍດາຍ ກວ້າງຂວາງ ແລະ ທົ່ວເຖິງ.

ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການຮ່ວມກັນກໍານົດຫຼັກການ, ລະບຽບການ ແລະ ວິທີການລະອຽດ ກ່ຽວກັບການສົ່ງເສີມການເຂົ້າເຖິງແຫຼ່ງທຶນສໍາລັບວິສາຫະກິດຂະໜາດນ້ອຍ ແລະ ກາງ.

### ມາດຕາ 16. ນະໂຍບາຍດ້ານພາສີ ແລະ ອາກອນ

ນະໂຍບາຍດ້ານພາສີ ແລະ ອາກອນ ແກ່ ວນກ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ພາສີ ແລະ ກົດໝາຍວ່າດ້ວຍ ສ່ວຍສາອາກອນ. ໃນກໍລະນີພິເສດ ເປັນຕົ້ນ ການສ້າງວຽກເຮັດງານທຳໃຫ້ຜູ້ດ້ອຍໂອກາດ, ຜູ້ທຸກຍາກ, ການປົກປັກຮັກສາ ແລະ ຟື້ນຟູສິ່ງແວດລ້ອມ, ການເສີມຂະຫຍາຍທິວຄິດປະດິດສ້າງ ແລະ ພູມປັນຍາ ຈະໄດ້ຮັບນະໂຍບາຍຍົກເວັ້ນ ຫຼື ຫຼຸດຜ່ອນດ້ານພາສີ ແລະ ອາກອນ ທີ່ ລັດຖະບານສະເໜີຕໍ່ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງ.

### ມາດຕາ 17. ການສ້າງ ແລະ ພັດທະນາຜູ້ປະກອບກິດຈະການ

ລັດ ຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ພາກສ່ວນຕ່າງໆເຂົ້າຮ່ວມໃນການສ້າງ ແລະ ພັດທະນາຜູ້ປະກອບກິດຈະການ ໂດຍສະເພາະແມ່ນຜູ້ປະກອບກິດຈະການເພດຍິງ ດ້ວຍຮູບການຕ່າງໆ ເປັນຕົ້ນ ການຝຶກອົບຮົມ, ການສ້າງສູນກໍ່ສ້າງຜູ້ປະກອບກິດຈະການ, ການດຳເນີນທຸລະກິດຕົວແທນ.

ລັດ ເອົາໃຈໃສ່ຕໍ່ການສ້າງ, ພັດທະນາ ແລະ ບັນຈຸຫຼັກສູດກ່ຽວກັບການປະກອບກິດຈະການເຂົ້າໃນລະບົບການສຶກສາແຫ່ງຊາດ ແລະ ສ້າງລະບົບການຍ້ອງຍໍຜູ້ປະກອບກິດຈະການ.

### ມາດຕາ 18. ການບໍລິການໃຫ້ຄຳປຶກສາ ພັດທະນາທຸລະກິດ

ລັດ ສ້າງເງື່ອນໄຂ, ອຳນວຍຄວາມສະດວກ, ຊຸກຍູ້ ແລະ ສົ່ງເສີມພາກສ່ວນຕ່າງໆ ເຄື່ອນໄຫວເຮັດການບໍລິການໃຫ້ຄຳປຶກສາ ພັດທະນາທຸລະກິດ ດ້ວຍການສ້າງຕັ້ງໜ່ວຍງານ ຫຼື ວິສາຫະກິດບໍລິການໃຫ້ຄຳປຶກສາດ້ານລະບຽບກົດໝາຍ ແລະ ດ້ານວິຊາການຕ່າງໆ, ການສ້າງເຄືອຂ່າຍຂອງຜູ້ຊ່ຽວຊານດ້ານຕ່າງໆ ເຊັ່ນ ດ້ານການຕະຫຼາດ, ການພັດທະນາຜະລິດຕະພັນ, ການບໍລິຫານ ແລະ ອື່ນໆ.

ລັດ ສະໜັບສະໜູນທາງດ້ານທຶນຮອນຕາມເງື່ອນໄຂຕົວຈິງໃຫ້ແກ່ ວນກ ເພື່ອເຂົ້າເຖິງການບໍລິການໃຫ້ຄຳປຶກສາ ພັດທະນາທຸລະກິດ.

### ມາດຕາ 19. ການຮ່ວມມືທຸລະກິດ ລະຫວ່າງ ວິສາຫະກິດຂະໜາດນ້ອຍ ແລະ ກາງ ກັບວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດ

ລັດ ສົ່ງເສີມການຮ່ວມມື ລະຫວ່າງ ວນກ ກັບວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດ ດ້ວຍການສ້າງນະໂຍບາຍ ແລະ ກົນໄກທີ່ເອື້ອອຳນວຍ ພ້ອມທັງກຳນົດລະບຽບການ ແລະ ມາດຕະການທີ່ຈຳເປັນ.

ວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດ ຕ້ອງໃຫ້ໂອກາດແກ່ ວນກ ເປັນຜູ້ສະໜອງວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ, ສິນຄ້າ ແລະ ການບໍລິການ ລວມທັງການຮັບເໝົາຕໍ່ຊ່ວງ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ແກ່ ວນກ ໂດຍການຖ່າຍທອດເຕັກໂນໂລຊີ ແລະ ຄວາມຮູ້ຄວາມສາມາດທາງດ້ານການບໍລິຫານ.

ວນກ ຕ້ອງໄດ້ປັບປຸງຄວາມສາມາດບໍລິຫານຈັດການ ແລະ ພັດທະນາເຕັກໂນໂລຊີ ໃນການຜະລິດ ເພື່ອຮັບປະກັນການສະໜອງສິນຄ້າ ແລະ ການບໍລິການໃຫ້ມີຄຸນນະພາບ ແລະ ປະລິມານ

ໂດຍສອດຄ່ອງກັບຄວາມຕ້ອງການຂອງວິສາຫະກິດຂະໜາດໃຫຍ່ ແລະ ວິສາຫະກິດການລົງທຶນຂອງຕ່າງປະເທດ.

**ມາດຕາ 20. ການເພີ່ມຜະລິດຕະພາບ**

ລັດ ສົ່ງເສີມການເພີ່ມຜະລິດຕະພາບ ເພື່ອຍົກສູງຄວາມສາມາດໃນການແຂ່ງຂັນ ແລະ ການພັດທະນາແບບຍືນຍົງຂອງ ວນກ ດ້ວຍການປັບປຸງແບບແຜນວິທີເຮັດວຽກ ແລະ ສະຕິການອອກແຮງງານໄປສູ່ຮູບແບບອຸດສາຫະກຳ ແລະ ມີລັກສະນະປະດິດສ້າງ.

ລັດ ສະໜັບສະໜູນໂຄງການຕ່າງໆ ກ່ຽວກັບການຍົກສູງປະສິດທິພາບ ແລະ ປະສິດທິຜົນຂອງການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ ທັງໃນພາກລັດ ແລະ ພາກທຸລະກິດ ເຊັ່ນ ການບຳລຸງຍົກລະດັບຜູ້ປະກອບກິດຈະການ, ການພັດທະນາສີມືແຮງງານ, ການຍົກລະດັບ ແລະ ການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ, ການປັບປຸງຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະ ການບໍລິການ.

**ມາດຕາ 21. ການເຂົ້າເຖິງ ແລະ ການຂະຫຍາຍ ຕະຫຼາດ**

ລັດ ຊຸກຍູ້ ແລະ ສົ່ງເສີມພາກສ່ວນຕ່າງໆ ໃຫ້ການສະໜັບສະໜູນ ວນກ ເພື່ອໃຫ້ສາມາດເຂົ້າເຖິງ ແລະ ຂະຫຍາຍ ຕະຫຼາດ ດ້ວຍການຈັດງານວາງສະແດງສິນຄ້າ ແລະ ການບໍລິການ, ການໂຄສະນາສິນຄ້າ, ການສຶກສາກ່ຽວກັບຕະຫຼາດ, ການແນະນຳຜະລິດຕະພັນ ແລະ ເຂົ້າຮ່ວມງານວາງສະແດງສິນຄ້າທັງພາຍໃນ ແລະ ຕ່າງປະເທດ, ການຈັບຄູ່ທຸລະກິດ ແລະ ການຮ່ວມລົງທຶນ ເພື່ອຂະຫຍາຍຕະຫຼາດ.

ລັດ ສ້າງເງື່ອນໄຂ ແລະ ໃຫ້ໂອກາດແກ່ ວນກ ເປັນຜູ້ສະໜອງສິນຄ້າ ແລະ ການບໍລິການ ໃນໂຄງການຈັດຊື້ດ້ວຍງົບປະມານຂອງລັດ.

**ມາດຕາ 22. ການຮ່ວມກຸ່ມທຸລະກິດ**

ລັດ ສົ່ງເສີມການຮ່ວມກຸ່ມທຸລະກິດຂອງ ວນກ ຕາມລະບຽບກົດໝາຍ ເພື່ອສ້າງເງື່ອນໄຂໃຫ້ວິສາຫະກິດດັ່ງກ່າວ ໄດ້ຮ່ວມມື ແລະ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ເປັນຕົ້ນ ການນຳໃຊ້ເຄື່ອງມືການຜະລິດ ແລະ ສິ່ງອຳນວຍຄວາມສະດວກຮ່ວມກັນ ເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ ແລະ ການບໍລິການ ພ້ອມທັງເພີ່ມຄວາມສາມາດໃນການສະໜອງສິນຄ້າ ແລະ ການບໍລິການ ຕາມຄວາມຕ້ອງການຂອງຕະຫຼາດ.

**ມາດຕາ 23. ສະຖານທີ່ປະກອບກິດຈະການ**

ລັດ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ຜູ້ປະກອບກິດຈະການ ວນກ ໄດ້ເຂົ້າເຖິງສະຖານທີ່ປະກອບກິດຈະການທີ່ໝັ້ນຄົງ ໃນການດຳເນີນທຸລະກິດ ດ້ານການຜະລິດ, ການຄ້າ ແລະ ການບໍລິການ.

ຂະແໜງການອຸດສາຫະກຳ ແລະ ການຄ້າ ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງແຜນກຳນົດສະຖານທີ່ປະກອບກິດຈະການ ທັງໄລຍະສັ້ນ ແລະ ໄລຍະຍາວ.

**ມາດຕາ 24. ການສົ່ງເສີມການນໍາໃຊ້ເຕັກໂນໂລຊີທີ່ກ້າວໜ້າ**

ລັດ ສົ່ງເສີມ ວນກ ໃຫ້ມີການນໍາໃຊ້ຜົນສໍາເລັດດ້ານເຕັກນິກ-ເຕັກໂນໂລຊີ ທີ່ກ້າວໜ້າເຂົ້າໃນການຜະລິດ, ການຄ້າ ແລະ ການບໍລິການ.

ລັດ ສະໜັບສະໜູນທຶນຮອນ ແລະ ຊຸກຍູ້ໃຫ້ສະຖາບັນຄົ້ນຄວ້າ ແລະ ສະຖາບັນການສຶກສາດໍາເນີນການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີ ເພື່ອໃຫ້ ວນກ ນໍາໃຊ້ເຂົ້າໃນການດໍາເນີນການຜະລິດທຸລະກິດ.

**ມາດຕາ 25. ການນໍາໃຊ້ ແລະ ການປົກປ້ອງຊັບສິນທາງປັນຍາ**

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກໃຫ້ ວນກ ປະດິດສ້າງ, ປະດິດຄິດແຕ່ງ, ສ້າງເສດຖະກິດພູມປັນຍາ ແລະ ນໍາໃຊ້ຊັບສິນທາງປັນຍາ ພ້ອມກັນນັ້ນກໍເອື້ອອໍານວຍໃຫ້ແກ່ ວນກ ໃນການຈົດທະບຽນ, ຄຸ້ມຄອງ ແລະ ປົກປ້ອງສິດຕໍ່ຊັບສິນທາງປັນຍາ.

**ມາດຕາ 26. ການສະໜອງ ແລະ ການເຂົ້າເຖິງ ຂໍ້ມູນຂ່າວສານ**

ລັດ ສົ່ງເສີມການສະໜອງ ແລະ ການເຂົ້າເຖິງ ຂໍ້ມູນຂ່າວສານ ໃຫ້ແກ່ ວນກ ດ້ວຍການສ້າງສູນຂໍ້ມູນຂ່າວສານ ເພື່ອເກັບກໍາ ແລະ ສັງລວມຂໍ້ມູນ ກ່ຽວກັບການສົ່ງເສີມ ວນກ ແລະ ສ້າງເຄືອຂ່າຍການສະໜອງ ແລະ ແລກປ່ຽນຂໍ້ມູນຂ່າວສານ ເປັນຕົ້ນ ຮູບແບບເອເລັກໂຕຣນິກ, ປຶ້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ, ສື່ມວນຊົນ ແລະ ອື່ນໆ ພ້ອມກັນນັ້ນ ກໍສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ ວນກ ໄດ້ເຂົ້າເຖິງຂໍ້ມູນຂ່າວສານຢ່າງງ່າຍດາຍ ແລະ ທັນການ.

ລັດ ຊຸກຍູ້ຂະແໜງການ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ໃຫ້ເຂົ້າຮ່ວມໃນການສະໜອງຂໍ້ມູນຂ່າວສານແກ່ ວນກ.

**ມາດຕາ 27. ການປະສານສົມທົບ**

ຂະແໜງການອຸດສາຫະກໍາ ແລະ ການຄ້າ ປະສານສົມທົບກັບຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ກໍານົດ ລະບຽບການ, ມາດຕະການ ແລະ ວິທີການລະອຽດ ເພື່ອຈັດຕັ້ງປະຕິບັດບັນດາກິດຈະການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

## ພາກທີ IV
## ການວາງແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 28. ການວາງແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ**

ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການຊີ້ນໍາກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ວາງ ແຜນພັດທະນາວິສາຫະ

ກິດຂະໜາດນ້ອຍ ແລະ ກາງ ເພື່ອນຳສະເໜີລັດຖະບານພິຈາລະນາ ແລະ ບັນຈຸເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳ ຫ້າປີ ແລະ ປະຈຳປີ.

**ມາດຕາ 29. ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ**

ບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ມີໜ້າທີ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມພາລະບົດບາດຂອງຕົນ.

**ມາດຕາ 30. ການຕິດຕາມປະເມີນຜົນ ແລະ ການລາຍງານ**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຊີ້ນຳກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການຕິດຕາມປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ແຕ່ລະໄລຍະ.

ບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຕ້ອງໃຫ້ການຮ່ວມມືໃນການສະໜອງຂໍ້ມູນ ແລະ ລາຍງານກ່ຽວກັບຜົນຂອງການຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າຂັ້ນຂອງຕົນ ໃນແຕ່ລະໄລຍະ.

## ພາກທີ V
## ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ

**ມາດຕາ 31. ການສ້າງຕັ້ງກອງທຶນ**

ລັດ ອະນຸຍາດໃຫ້ສ້າງຕັ້ງກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອລະດົມທຶນຈາກແຫຼ່ງຕ່າງໆຢ່າງລວມສູນ ແນໃສ່ຮັບປະກັນໃຫ້ມີທຶນຮອນທີ່ໝັ້ນຄົງ ແລະ ຕໍ່ເນື່ອງເຂົ້າໃນວຽກງານສົ່ງເສີມ ວນກ ໃຫ້ມີປະສິດທິຜົນ.

**ມາດຕາ 32. ຈຸດປະສົງຂອງກອງທຶນ**

ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຈຸດປະສົງສ້າງເປັນແຫຼ່ງທຶນ ປະກອບສ່ວນ ໃຫ້ທະນາຄານທຸລະກິດ, ສະຖາບັນການເງິນອື່ນ ແລະ ໂຄງການສິນເຊື່ອທີ່ກ່ຽວຂ້ອງ ໃນການສະໜອງສິນເຊື່ອໃຫ້ແກ່ ວນກ ແລະ ເປັນງົບປະມານ ສຳລັບການຈັດຕັ້ງປະຕິບັດ ໂຄງການວິຊາການໃນການສ້າງຄວາມເຂັ້ມແຂງ ແລະ ຄວາມສາມາດໃນການແຂ່ງຂັນ ໃຫ້ແກ່ ວນກ.

ມາດຕາ 33. **ແຫຼ່ງຂອງກອງທຶນ**

**ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ມາຈາກແຫຼ່ງຕ່າງໆ ດັ່ງນີ້:**

1. ງົບປະມານຂອງລັດ;
2. ການຊ່ວຍເຫຼືອລ້າ;
3. ການກູ້ຢືມຈາກພາຍໃນ ແລະ ຕ່າງປະເທດ;
4. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດ້ວຍຄວາມສະໝັກໃຈ;
5. ແຫຼ່ງອື່ນໆ ທີ່ບໍ່ຂັດກັບລະບຽບກົດໝາຍ.

ມາດຕາ 34. **ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄຸ້ມຄອງກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ສ່ວນການນຳໃຊ້ກອງທຶນດັ່ງກ່າວ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມຈຸດປະສົງຂອງກອງທຶນ ທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້.

ລະບຽບການກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ກອງທຶນດັ່ງກ່າວ ໄດ້ກຳນົດໄວ້ຕ່າງຫາກ.

## ພາກທີ VI
## ໂຄງປະກອບການຈັດຕັ້ງວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ

ມາດຕາ 35. **ໂຄງປະກອບການຈັດຕັ້ງວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ**

**ໂຄງປະກອບການຈັດຕັ້ງວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ມີ ດັ່ງນີ້:**

- ຢູ່ຂັ້ນສູນກາງ: ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍມີກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນໃຈກາງ;
- ຢູ່ຂັ້ນທ້ອງຖິ່ນ: ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ໂດຍມີຂະແໜງຮັບຜິດຊອບວຽກງານ ດັ່ງກ່າວ;
- ຢູ່ບັນດາຂະແໜງການອື່ນ;
- ຢູ່ພາກທຸລະກິດ.

ການຈັດຕັ້ງວຽກງານດັ່ງກ່າວ ໃຫ້ຖືເປັນອົງການຄຸ້ມຄອງວຽກງານສົ່ງເສີມ ວນກ.

ມາດຕາ 36. **ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

**ໃນການຄຸ້ມຄອງວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າສ້າງ, ປັບປຸງນະໂຍບາຍ, ຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອນຳສະເໜີໃຫ້ລັດຖະບານພິຈາລະນາຕົກລົງ;

2. ຊີ້ນຳ ແລະ ຕິດຕາມການເຄື່ອນໄຫວຂອງກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ລວມທັງກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;
3. ຄົ້ນຄວ້າຂະໜາດ ແລະ ເງື່ອນໄຂສົ່ງເສີມ ວນກ ເພື່ອນຳສະເໜີຕໍ່ລັດຖະບານພິຈາລະນາ ຕົກລົງ;
4. ສະເໜີສ້າງຕັ້ງອົງການຜະລິດຕະພາບແຫ່ງຊາດລາວ ເພື່ອເຄື່ອນໄຫວວຽກງານ ຮ່ວມກັບອົງການຜະລິດຕະພາບແຫ່ງອາຊີ ເພື່ອໃຫ້ລັດຖະບານພິຈາລະນາຕົກລົງ;
5. ສະເໜີນຳໃຊ້ມາດຕະການສຸກເສີນ ເພື່ອຕອບໂຕ້ວິກິດການ ແລະ ໄພພິບັດຕ່າງໆ ທີ່ສົ່ງຜົນກະທົບທາງລົບຕໍ່ ວນກ ເພື່ອໃຫ້ລັດຖະບານພິຈາລະນາ;
6. ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ປະຈຳປີ ແລະ ປະຈຳ ຫ້າປີ;
7. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດ ແລະ ຄູ່ຮ່ວມພັດທະນາ ໃນການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມຄວາມຮັບຜິດຊອບຂອງຕົນ;
9. ລະດົມ ແລະ ສະໜອງທຶນໃຫ້ແກ່ໂຄງການກ່ຽວຂ້ອງກັບການສົ່ງເສີມ ວນກ ທີ່ຈັດຕັ້ງປະຕິບັດ ໂດຍພາກສ່ວນຕ່າງໆ;
10. ຊີ້ນຳການເຜີຍແຜ່ຂໍ້ມູນຂ່າວສານ, ການຝຶກອົບຮົມ, ສຳມະນາ ແລະ ອື່ນໆ ເພື່ອບຳລຸງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດດ້ານການສົ່ງເສີມ ວນກ ໃຫ້ແກ່ພະນັກງານຂອງລັດ ແລະ ພາກທຸລະກິດ;
11. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານສົ່ງເສີມ ວນກ;
12. ສະຫຼຸບ ແລະ ລາຍງານຜົນຂອງການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ວນກ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
13. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 37. ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນ**

**ໃນການຄຸ້ມຄອງວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ແຜນພັດທະນາ ແລະ ກົດໝາຍ ກ່ຽວກັບວິສາຫະກິດຂະໜາດນ້ອຍ ແລະ ກາງ;
2. ຊີ້ນຳ ແລະ ຕິດຕາມການເຄື່ອນໄຫວຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ ກ່ຽວກັບວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;

3. ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານສົ່ງເສີມ ວນກ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນແຕ່ລະໄລຍະຢູ່ທ້ອງຖິ່ນຂອງຕົນ;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດໃນການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມຄວາມຮັບຜິດຊອບຂອງຕົນ;
5. ລະດົມທຶນໃຫ້ແກ່ໂຄງການ ກ່ຽວຂ້ອງກັບການສົ່ງເສີມ ວນກ ຈາກພາກສ່ວນຕ່າງໆ;
6. ເຜີຍແຜ່ຂໍ້ມູນຂ່າວສານ, ຈັດຕັ້ງການຝຶກອົບຮົມ, ສຳມະນາ ແລະ ອື່ນໆ ເພື່ອບຳລຸງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດດ້ານການສົ່ງເສີມ ວນກ ໃຫ້ແກ່ພະນັກງານຂອງລັດ ແລະ ພາກທຸລະກິດ ຕາມຄວາມຮັບຜິດຊອບຂອງຕົນ;
7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານສົ່ງເສີມ ວນກ ຕາມການມອບໝາຍ;
8. ສະຫຼຸບ ແລະ ລາຍງານຜົນຂອງການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ວນກ ຕໍ່ອົງການປົກຄອງແຂວງ, ນະຄອນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງເປັນປົກກະຕິ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມລະບຽບກົດໝາຍ ແລະ ຕາມການມອບໝາຍ ຂອງຂັ້ນເທິງ.

ສຳລັບສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ກ່ຽວກັບວຽກງານສົ່ງເສີມ ວນກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 38. ສິດ ແລະ ໜ້າທີ່ ຂອງບັນດາຂະແໜງການອື່ນ

**ໃນການຄຸ້ມຄອງວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ບັນດາຂະແໜງການອື່ນ ມີສິດ ແລະ ໜ້າທີ່ ດັ່ງນີ້:**

1. ສ້າງຕັ້ງສູນ ຫຼື ສະຖາບັນວິຊາການ ເຮັດໜ້າທີ່ສະໜັບສະໜູນ ວນກ ໃນດ້ານຕ່າງໆທີ່ຕິດພັນກັບພາລະບົດບາດຂອງຂະແໜງການຕົນ ເຊັ່ນ ການພັດທະນາຜູ້ປະກອບກິດຈະການ, ການພັດທະນາສີມືແຮງງານ, ການຄົ້ນຄວ້າວິໄຈ ເພື່ອພັດທະນາຜະລິດຕະພັນ, ການຝຶກອົບຮົມ, ການສຳມະນາ, ການໃຫ້ຄຳປຶກສາ ແລະ ການບໍລິການດ້ານວິຊາການອື່ນໆ.
2. ໂຄສະນາ, ເຜີຍແຜ່, ຊີ້ນຳ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານສົ່ງເສີມ ວນກ ທີ່ຂຶ້ນກັບຕົນ;
3. ສະຫຼຸບ, ສັງລວມ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານສົ່ງເສີມ ວນກ ໃຫ້ຂັ້ນເທິງຂອງຕົນ ແລະ ຂະແໜງການອຸດສາຫະກຳ ແລະ ການຄ້າໃນຂັ້ນຂອງຕົນຢ່າງເປັນປົກກະຕິ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມພາລະບົດບາດ ແລະ ລະບຽບກົດໝາຍ.

**ມາດຕາ 39. ສິດ ແລະ ໜ້າທີ່ຂອງພາກທຸລະກິດ**

ໃນການຄຸ້ມຄອງວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ຂັ້ນແຂວງ, ບັນດາສະມາຄົມ ແລະ ກຸ່ມທຸລະກິດ ມີພາລະບົດບາດເປັນຕົວແທນແຫ່ງສິດຜົນປະໂຫຍດໃຫ້ແກ່ ວນກ, ມີສິດ ແລະ ໜ້າທີ່ສະໜອງການບໍລິການໃຫ້ຄຳປຶກສາ ພັດທະນາທຸລະກິດໃນດ້ານຕ່າງໆ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 40. ຂໍ້ຫ້າມສຳລັບການຈັດຕັ້ງ ແລະ ພະນັກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ**

ຫ້າມການຈັດຕັ້ງ ແລະ ພະນັກງານສົ່ງເສີມ ວນກ ມີການກະທຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບທາງດ້ານທຸລະກິດຂອງ ວນກ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກ ວນກ ນັ້ນ;
2. ປອມແປງ, ບິດເບືອນຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ສ້າງຄວາມເສັຍຫາຍໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນໂດຍເຈດຕະນາ;
3. ທວງ, ຖາມເອົາ ຫຼື ຮັບສິນບົນຈາກຜູ້ປະກອບກິດຈະການ;
4. ລະເມີດຈັນຍາບັນຂອງພະນັກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;
5. ມີການກະທຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 41. ຂໍ້ຫ້າມສຳລັບຜູ້ປະກອບກິດຈະການ**

ຫ້າມຜູ້ປະກອບກິດຈະການ ມີການກະທຳ ດັ່ງນີ້:

1. ລາຍງານເທັດຂໍ້ມູນ ກ່ຽວກັບສະພາບການເຄື່ອນໄຫວທຸລະກິດຂອງຕົນ;
2. ປອມແປງ, ບິດເບືອນຂໍ້ມູນສະເພາະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ເພື່ອຜົນປະໂຫຍດຂອງທຸລະກິດຕົນ ຫຼື ສ້າງຄວາມເສັຍຫາຍແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນໂດຍເຈດຕະນາ;
3. ສະເໜີໃຫ້ ຫຼື ໃຫ້ສິນບົນແກ່ການຈັດຕັ້ງ ແລະ ພະນັກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;
4. ມີການກະທຳອື່ນທີ່ເປັນການລະເມີດລະບຽບກົດໝາຍ.

# ພາກທີ VIII

# ການກວດກາ

**ມາດຕາ 42. ອົງການກວດກາວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ**

**ອົງການກວດກາວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ປະກອບດ້ວຍ:**

- ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 35 ຂອງກົດໝາຍສະບັບນີ້;
- ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການກວດສອບແຫ່ງລັດ.

**ມາດຕາ 43. ຈຸດປະສົງຂອງການກວດກາ**

ຈຸດປະສົງຂອງການກວດກາວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນເພື່ອເຮັດໃຫ້ການຄຸ້ມຄອງການເຄື່ອນໄຫວວຽກງານຂອງລະບົບການຈັດຕັ້ງສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ມີປະສິດທິພາບ, ປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 44. ແຜນການກວດກາ**

ອົງການກວດກາ ສ້າງແຜນການດຳເນີນງານການກວດກາຂອງຕົນ ເພື່ອຕິດຕາມ ກວດກາວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ຕິດພັນກັບບັນດາກິດຈະກຳ ແລະ ຜົນຂອງການສົ່ງເສີມທີ່ໄດ້ກຳນົດໄວ້ໃນແຜນດຳເນີນງານແຕ່ລະໄລຍະ ຂອງລະບົບການຈັດຕັ້ງສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ.

**ມາດຕາ 45. ເນື້ອໃນກວດກາ**

**ເນື້ອໃນກວດກາ ມີ ດັ່ງນີ້:**

- ການຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນດຳເນີນງານການເຄື່ອນໄຫວຂອງລະບົບການຈັດຕັ້ງສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;
- ການກຳນົດລະບຽບການ, ມາດຕະການ ແລະ ວິທີການແກ້ໄຂຜົນຂອງການກວດກາ;
- ການລາຍງານກ່ຽວກັບຜົນຂອງການກວດກາ.

**ມາດຕາ 46. ຮູບການກວດກາ**

**ການກວດກາ ມີ ສາມ ຮູບການ ດັ່ງນີ້:**

- ການກວດກາ ປົກກະຕິ;
- ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
- ການກວດກາກະທັນຫັນ.

ການກວດກາ ປົກກະຕິ ແມ່ນ ການກວດກາທີ່ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ.

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຈະຖືກກວດກາຮູ້ລ່ວງໜ້າຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາກະທັນຫັນ ແມ່ນ ການກວດກາເມື່ອເຫັນວ່າມີຄວາມຈຳເປັນ ແຕ່ການລົງກວດການັ້ນແມ່ນດຳເນີນຢ່າງຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍທີ່ຈະຖືກກວດກາຮູ້ກ່ອນລ່ວງໜ້າ.

ການກວດກາ ສາມາດດຳເນີນທັງການກວດກາດ້ານເອກະສານ ແລະ ການລົງປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.

### ມາດຕາ 47. ການກວດກາພາຍນອກ

ການກວດກາພາຍນອກ ມີຈຸດປະສົງກວດກາການປະຕິບັດໜ້າທີ່ຂອງການຈັດຕັ້ງສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ, ອົງການຄຸ້ມຄອງ ແລະ ອົງການກວດກາ ເພື່ອໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ ແລະ ຍຸຕິທຳ.

**ການກວດກາພາຍນອກ ມີດັ່ງນີ້:**

1. ການກວດກາຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ;
2. ການກວດກາຂອງອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດກາລັດ;
3. ການກວດກາຂອງອົງການກວດສອບແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການກວດສອບ.

### ມາດຕາ 48. ການລາຍງານ ແລະ ການແກ້ໄຂຜົນຂອງການກວດກາ

ຄະນະກວດກາ ຕ້ອງສ້າງບົດບັນທຶກການກວດກາ, ບົດລາຍງານພ້ອມທັງສະເໜີວິທີການແກ້ໄຂຕໍ່ການລະເມີດ ແລະ ລາຍງານຕໍ່ອົງການທີ່ມີອຳນາດພິຈາລະນາ ກ່ຽວກັບຜົນຂອງການກວດກາ.

ຄະນະກວດກາ ຕ້ອງມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບການສະຫຼຸບລາຍງານຜົນຂອງການກວດກາ ແລະ ຮັກສາຄວາມລັບດ້ານເອກະສານວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ.

### ມາດຕາ 49. ສິດ ແລະ ພັນທະຂອງເປົ້າໝາຍທີ່ຖືກກວດກາ

**ເປົ້າໝາຍທີ່ຖືກກວດກາ ມີສິດ ແລະ ພັນທະ ດັ່ງນີ້:**

1. ຮ້ອງຂໍໃຫ້ຄະນະກວດການຳສະເໜີຂໍ້ຕົກລົງກ່ຽວກັບການກວດກາ;
2. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການກວດກາທີ່ບໍ່ຖືກຕ້ອງຕາມລະບຽບຫຼັກການທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ;

3. ອຳນວຍຄວາມສະດວກໃນການປະຕິບັດໜ້າທີ່ຂອງຄະນະກວດກາ, ສະໜອງເອກະສານ, ຂໍ້ມູນ, ພະຍານຫຼັກຖານ ແລະ ຕອບບັນຫາທີ່ພົວພັນເຖິງເນື້ອໃນກວດກາ ຕາມການສະເໜີຂອງຄະນະກວດກາ.

## ພາກທີ IX
## ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບ

**ມາດຕາ 50. ງົບປະມານ**

ລັດຖະບານ ຈັດສັນງົບປະມານເປັນການສະເພາະ ສຳລັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍບັນຈຸເຂົ້າໃນສາລະບານງົບປະມານຂອງລັດ.

ການຄຸ້ມຄອງ ແລະ ການນຳໃຊ້ງົບປະມານ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ.

**ມາດຕາ 51. ເຄື່ອງໝາຍ ແລະ ຕາປະທັບ**

ການຈັດຕັ້ງສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ມີເຄື່ອງໝາຍ ແລະ ຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 52. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ຢ່າງມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 53. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບການສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນຕົ້ນ ຂໍ້ຫ້າມຕ່າງໆ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ລົງໂທດທາງອາຍາຕາມກໍລະນີ ເບົາ ຫຼື ໜັກ ຫຼື ໃຊ້ແທນຄ່າເສັຍຫາຍທາງແພ່ງ ຕາມທີ່ຕົນໄດ້ກໍ່ຂຶ້ນຕາມລະບຽບກົດໝາຍ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 54. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍ ສະບັບນີ້.

**ມາດຕາ 55. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງທີ່ກສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້